# ວາລະສານ ສມກຈ

**ສະບັບທີ 5, ເດືອນມັງກອນ, ປີ 2015**

## ບົດບັນນາທິການ

**ສະບາຍດີ ບັນດາທ່ານຜູ້ອ່ານ,**

ສມກຈ ມີຄວາມຍິນດີ ນຳສະເໜີ ວາລະສານສະບັບທີ 5 ຕໍ່ບັນດາທ່ານ. ໃນວາລະສານສະບັບນີ້ ພວກເຮົາຈະນຳສະເໜີສອງຫົວຂໍ້ທີ່ສຳຄັນ ແກ່ບັນດາທ່ານ ເຊິ່ງເປັນໜ້າວຽກທີ່ ສມກຈ ກຳລັງປະຕິບັດຢູ່ ນັ້ນກໍ່ຄື: ຫລັກສູດບຳລຸງການເງິນຈຸລະພາກ ທີ່ມີໃບຍັ້ງຢືນ (MFMCC) ແກ່ບັນດາຜູ້ຈັດການຂອງສະຖາບັນການເງິນຈຸລະພາກ ແລະ ການກວດສອບຜົນການປະຕິບັດງານດ້ານສັງຄົມ ທີ່ນຳໃຊ້ເຄື່ອງມືຕົວຊີ້ວັດຜົນການປະຕິບັດງານດ້ານສັງຄົມ.

ໃນຫົວຂໍ້ທຳອິດນີ້ ທ່ານຈະໄດ້ຮູ້ຈັກກ່ຽວກັບຈຸດປະສົງ, ເນື້ອໃນຫຼັກ, ກຸ່ມເປົ້າໝາຍ ແລະ ການກຳນົດເວລາ ຂອງຫລັກສູດບຳລຸງການເງິນຈຸລະພາກ ທີ່ມີໃບຍັ້ງຢືນ (MFMCC) ທີ່ໄດ້ວາງແຜນໄວ້ແລ້ວນັ້ນ. ນອກຈາກນັ້ນ ທ່ານຍັງຈະໄດ້ຮຽນຮູ້ວ່າ ມາຮອດປະຈຸບັນພວກເຮົາໄດ້ຈັດຕັ້ງປະຕິບັດວຽກງານນີ້ໄປຮອດໃສແລ້ວ.

ສ່ວນຫົວຂໍ້ທີສອງແມ່ນຈະໄດ້ເນັ້ນໃສ່ໜ້າວຽກການກວດສອບຂອງຜົນການປະຕິບັດງານດ້ານສັງຄົມ ທີ່ນຳໃຊ້ເຄື່ອງມືຕົວຊີ້ວັດຜົນການປະຕິບັດງານດ້ານສັງຄົມ (CERISE SPI) ເຊິ່ງເປັນເຄື່ອງມື ເພື່ອປະເມີນຜົນການປະຕິບັດງານດ້ານສັງຄົມຂອງສກຈ. ຫົວຂໍ້ນີ້ແມ່ນຈະໄດ້ເວົ້າເຖິງເຫດຜົນ ແລະ ກອບໜ້າວຽກຂອງເຄື່ອງມືດັ່ງກ່າວນີ້ ແລະ ອະທິບາຍຫຍໍ້ກ່ຽວກັບວິທີການໃນການປະຕິບັດ ການກວດສອບຜົນການປະຕິບັດງານດ້ານສັງຄົມ.

ຄືດັ່ງໃນວາລະສານສະບັບກ່ອນໆ, ໃນໜ້າແຈ້ງຂ່າວຂອງ ສມກຈ ທ່ານຈະໄດ້ພົບກັບຂ່າວໃໝ່ລ້າສຸດຂອງ ສມກຈ, ວຽກງານການພັດທະນາດ້ານສະຖາບັນຂອງອົງກອນ ແລະ ບັນດາກິດຈະກຳຕ່າງໆ.

ພວກຂ້າພະເຈົ້າຫວັງຢ່າງຍິ່ງວ່າ ວາລະສານສະບັບນີ້ ຈະໃຫ້ຂໍ້ມູນຂ່າວສານ ທີ່ໜ້າສົນໃຈ ແກ່ບັນດາທ່ານ. ຖ້າທ່ານມີຂໍ້ຄິດເຫັນໃດໆກ່ຽວກັບວາລະສານສະບັບນີ້ ກະລຸນາສົ່ງໄປຫາພວກຂ້າພະເຈົ້າດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ປະມວນ ເພັດທານີ
ຜູ້ອຳນວຍການ ສມກຈ

## ສາລະບານ


ຫລັກສູດບຳລຸງການເງິນຈຸລະພາກ ໃຫ້ແກ່ ຜູ້ຈັດການ ສກຈ ໜ. 2

ການກວດສອບຜົນການປະຕິບັດງານດ້ານສັງຄົມ: ເຄື່ອງມືເພື່ອທຳການປະເມີນຜົນການປະຕິບັດງານດ້ານສັງຄົມ ໜ. 3

ຂ່າວສານຈາກສະມາຊິກຂອງພວກເຮົາ ໜ. 4

ຂ່າວສານຈາກ ສມກຈ ໜ. 5




ການສຳພາດ ລູກຄ້າຂອງ ສກຈບ ໄຊນິຍົມ ໃນລະຫວ່າງການກວດສອບຜົນການປະຕິບັດງານດ້ານສັງຄົມ ໃນເດືອນທັນວາ ປີ 2014 ທີ່ ແຂວງອຸດົມໄຊ

## ເຫດການຕ່າງໆໃນຕໍ່ໜ້າ

ກອງປະຊຸມ ສະພາບໍລິຫານ / ກອງປະຊຸມທາງດ້ານວິຊາການຂອງສະມາຊິກ ໄຕມາດທີ 1 ຂອງ ປີ 2015

ການປະເມີນຜົນການປະຕິບັດງານ ດ້ານສັງຄົມ 2 ຄັ້ງ ໄຕມາດທີ 1 ຂອງປີ 2015

ການຝຶກອົບຮົມເປັນຄູຝຶກ ຫລັກສູດບຳລຸງການເງິນຈຸລະພາກ ທີ່ມີໃບຍັ້ງຢືນ ໄຕມາດທີ 3 ຂອງປີ 2015

## ຫລັກສູດບຳລຸງການເງິນຈຸລະພາກ ທີ່ມີໃບຢັ້ງຢືນ ໃຫ້ແກ່ຜູ້ຈັດການ ສກຈ

*ການຂາດຄວາມຮູ້ທາງດ້ານວິຊາການ ແລະ ຄວາມຊຳນານງານຂອງບັນດາຜູ້ຈັດການ ແລະ ພະນັກງານຂອງ ສກຈ ໃນ ສປປ ລາວ ແມ່ນມີສ່ວນພົວພັນອັນໃຫຍ່ຫຼວງ ຕໍ່ການຂະຫຍາຍຕົວ ແລະ ການປັບປຸງ ຜົນການປະຕິບັດງານຂອງຂະ ແໜງການເງິນຈຸລະພາກ ໃນ ສປປ ລາວ. ແລະ ຜ່ານມາແມ່ນຍັງບໍ່ທັນມີລະບົບການສຶກສາ ຫຼື ຫຼັກສູດການຝຶກອົບຮົມ ທີ່ເປັນທາງການ ກ່ຽວກັບວຽກງານການເງິນຈຸລະພາກ ໃນ ສປປ ລາວ. ຍ້ອນແນວນັ້ນ, ສມກຈ ຈຶ່ງໄດ້ຕັດສິນໃຈໃນການເລີ່ມຕົ້ນຫລັກສູດບຳລຸງການເງິນຈຸລະພາກ ທີ່ມີໃບຢັ້ງຢືນ ໃຫ້ແກ່ຜູ້ຈັດການ ສກຈ (MFMCC).*

### ການແນະນຳກ່ຽວກັບຫລັກສູດບຳລຸງການເງິນຈຸລະພາກ ທີ່ມີໃບຢັ້ງຢືນ ໃຫ້ແກ່ຜູ້ຈັດການ ສກຈ

ຈຸດປະສົງຂອງ ຫລັກສູດບຳລຸງການເງິນຈຸລະພາກ ທີ່ມີໃບຢັ້ງຢືນໃຫ້ແກ່ຜູ້ຈັດການ ສກຈ (MFMCC) ແມ່ນເພື່ອເຮັດໃຫ້ຜູ້ຈັດການໃໝ່ ແລະ ຜູ້ຈັດການ ທີ່ມີໃນປະຈຸບັນຂອງ ສກຈ ໃນ ສປປ ລາວ ໄດ້ມີຄວາມຮູ້ພື້ນຖານ ກ່ຽວກັບການດຳເນີນທຸລະກິດການເງິນຈຸລະພາກ ທີ່ສຸມໃສ່ພາລະບົດບາດ ແລະ ໜ້າທີ່ໃນລະດັບຜູ້ບໍລິຫານ. ໃນເວລາດຽວກັນນັ້ນ, ຫຼັກສູດດັ່ງກ່າວນີ້ຍັງມີເປົ້າໝາຍ ເພື່ອປະກອບສ່ວນເຂົ້າໃນການເພີ່ມຈຳນວນຄູຝຶກວຽກງານການເງິນຈຸລະພາກ ທີ່ມີຄຸນນະພາບ. ກຸ່ມເປົ້າໝາຍຂອງຫຼັກສູດດັ່ງກ່າວນີ້ແມ່ນບັນດາຜູ້ຈັດການ ຫຼື ຮອງຜູ້ຈັດການ ຂອງ ສກຈ. ແຕ່ລະຊຸດຂອງຫຼັກສູດດັ່ງກ່າວນີ້ແມ່ນຈະປະກອບມີຜູ້ເຂົ້າຮ່ວມເຖິງ 20 ຄົນ. ຫຼັກສູດດັ່ງກ່າວນີ້ຈະປະກອບດ້ວຍການຝຶກອົບຮົມລວມທັງໝົດ 29 ວັນ ທີ່ຈັດຂຶ້ນພາຍໃນຊ່ວງໄລຍະເວລາ 6 ເດືອນ ນັ້ນກໍ່ຄື ຈະໃຊ້ເວລາຝຶກອົບຮົມ 5 ວັນ ຕໍ່ ເດືອນ.

### ການຝຶກອົບຮົມເປັນຄູຝຶກ ເຊິ່ງເປັນເງື່ອນໄຂເລີ່ມຕົ້ນຂອງຫຼັກສູດ MFMCC

ຫຼັກສູດການອອກໃບປະກາດນີ້ ໂດຍພື້ນຖານແລ້ວປະກອບດ້ວຍ 3 ອົງປະກອບ ຫຼື ບາດກ້າວ: i) ການອອກແບບ & ການພັດທະນາຫຼັກສູດ; ii) ຫຼັກສູດຝຶກອົບຮົມເປັນຄູຝຶກ (ToT), ແລະ iii) ການສະໜອງການຝຶກອົບຮົມຕົວຈິງ.

ການອອກແບບອົງປະກອບ ແລະ ພັດທະນາ ປະກອບດ້ວຍການພັດທະນາຄູ່ມືຂອງຄູຝຶກ, ການລວບລວມເອກະສານສຳລັບຜູ້ເຂົ້າຮ່ວມ ແລະ ການພັດທະນາວິທີການຝຶກອົບຮົມທີ່ເຫມາະສົມສຳລັບຫົວຂໍ້ການຝຶກອົບຮົມທັງຫມົດ. ນອກຈາກນີ້ຍັງມີການກະກຽມເຄື່ອງມືການກວດສອບສຳລັບແຕ່ລະຫົວຂໍ້ການຝຶກອົບຮົມ ແລະ ແປເອກະສານທັງຫມົດເປັນພາສາລາວ.

ການຝຶກອົບຮົມຄູຝຶກ (ToT) ມີຈຸດປະສົງເນັ້ນໃສ່ຄູຝຶກຜູ້ທີ່ມີປະສົບການ ແລະ ຜູ້ປະຕິບັດງານຕົວຈິງດ້ານການເງິນຈຸລະພາກ ແລະ ຈະໄດ້ຮັບການຝຶກອົບຮົບໂດຍ ຄູຝຶກຕົວແບບ (master trainers) ຈາກຕ່າງປະເທດ/ລະດັບພາກພື້ນໜຶ່ງທ່ານ ແລະ ຄູຝຶກທ້ອງຖິ່ນໜຶ່ງທ່ານ. ໃນຕອນທ້າຍຂອງການຝຶກອົບຮົມການເປັນຄູຝຶກ, ຄູຝຶກຕົວແບບ (master trainers) ຈະຮັບຮອງໃຫ້ຜູ້ເຂົ້າຮ່ວມການຝຶກອົບຮົມທີ່ປະສົບຜົນສຳເລັດເປັນຄູຝຶກທີ່ມີຄຸນນະພາບພາຍໃຕ້ ຫລັກສູດບຳລຸງການເງິນຈຸລະພາກ ທີ່ມີໃບຢັ້ງຢືນ (MFMCC).

ການຝຶກອົບຮົມຄູຝຶກ ຈະຖືກຈັດເປັນສອງຊຸດ ເຊິ່ງໄລຍະເວລາຂອງແຕ່ລະຊຸດຂອງການຝຶກອົບຮົມ ຈະໃຊ້ເວລາ ສອງອາທິດ ແລະ ຈຳນວນຜູ້ເຂົ້າຮ່ວມທີ່ຄາດຫວັງຈະໃຫ້ເຂົ້າຮ່ວມແມ່ນປະມານ 15 ຫາ 20 ທ່ານຕໍ່ຊຸດ.

### ແປດ ຫົວຂໍ້ການຝຶກອົບຮົມ

ເນື້ອໃນທີ່ຄາດຫວັງ ຂອງຫລັກສູດບຳລຸງການເງິນຈຸລະພາກ ທີ່ມີໃບຢັ້ງຢືນ ນີ້ ຈະອີງໃສ່ຜົນຂອງການສຳຫຼວດລະຫວ່າງຜູ້ປະຕິບັດງານຕົວຈິງດ້ານການເງິນຈຸລະພາກ, ຜູ້ໃຫ້ທຶນ ແລະ ຜູ້ໃຫ້ບໍລິການການຝຶກອົບຮົມ ທີ່ໄດ້ດຳເນີນໃນປີ 2012 ໂດຍມູນນິທິທະນາຄານເງິນຝາກປະຢັດເພື່ອການຮ່ວມມືສາກົນຂອງປະເທດເຢຍລະມັນ.

ຫຼັກສູດການຝຶກອົບຮົມປະກອບດ້ວຍ 8 ຫົວຂໍ້ການຝຶກອົບຮົມດັ່ງຕໍ່ໄປນີ້: 1. ຂໍ້ມູນເບື້ອງຕົ້ນກ່ຽວກັບການເງິນຈຸລະພາກ; 2. ການວາງແຜນທຸລະກິດ ແລະ ຍຸດທະສາດ; 3. ການບໍລິຫານຊັບພະຍາກອນມະນຸດ ແລະ ທັກສະຄວາມເປັນຜູ້ນຳ; 4. ການປ່ອຍສິນເຊື່ອ ແລະ ບໍລິຫານໜີ້ຊັກຊ້າ; 5. ການຄຸ້ມຄອງ ແລະ ການບໍລິຫານ ສະຖາບັນການເງິນຈຸລະພາກ; 6. ການບໍລິຫານຈັດການດ້ານການເງິນ ແລະ ຜົນການປະຕິບັດງານດ້ານສັງຄົມ / ການບັນຊີ / ລະບົບຈັດການຂໍ້ມູນຂ່າວສານ; 7. ການພັດທະນາຜະລິດຕະພັນ; 8. ການກົມກຽວກັນຂອງລະບຽບຫຼັກການ ຂອງຜູ້ອອກລະບຽບ ແລະ ຂອງສະຖາບັນ (MFI) ແລະ ການກວດກາພາຍໃນ.

> **ການຈັດຕັ້ງປະຕິບັດຫລັກສູດບຳລຸງການເງິນຈຸລະພາກ ທີ່ມີໃບຢັ້ງຢືນ ໃຫ້ແກ່ຜູ້ຈັດການ ສກຈ: ພວກເຮົາຈັດຕັ້ງປະຕິບັດຫຼັກສູດນີ້ຮອດໃສແລ້ວ?**
>
> ໃນເດືອນກໍລະກົດ ປີ 2014, ສມກຈ ໄດ້ເລີ່ມເປີດຂະບວນການ ໃຫ້ບັນດາບໍລິສັດທີ່ປຶກສາ ຫຼື ສະຖາບັນຕ່າງໆສົ່ງບົດສະເໜີໂຄງການເຂົ້າປະກວດ ກ່ຽວກັບການອອກແບບ ແລະ ການພັດທະນາ ພ້ອມທັງຫົວຂໍ້ການຝຶກອົບຮົມຄູຝຶກສຳລັບຫລັກສູດບຳລຸງການເງິນຈຸລະພາກ ທີ່ມີໃບຢັ້ງຢືນ ໃຫ້ແກ່ຜູ້ຈັດການ. ເຊິ່ງໃນນັ້ນມີສີ່ (4) ທີມງານທີ່ປຶກສາສາກົນ ແລະ ພາຍໃນ/ບໍລິສັດທີ່ປຶກສາໄດ້ສົ່ງບົດສະເຫນີໂຄງການ. ໃນທີ່ສຸດນີ້, ໂຮງຮຽນແຟຼງເຟີດ (Frankfurt School) ຢູ່ປະເທດເຢຍລະມັນໄດ້ຖືກຄັດເລືອກໂດຍຄະນະກຳມະການທີ່ກ່ຽວຂ້ອງ.
>
> ໃນທີ່ສຸດການເຮັດສັນຍາກັບໂຮງຮຽນແຟຼງເຟີດ (Frankfurt School) ກໍ່ໄດ້ຖືກລົງນາມ ຫຼື ເຊັນກັນ ໃນເດືອນທັນວາ ປີ 2014 ແລະ ອຸປະກອນການຝຶກອົບຮົມທັງຫມົດຈະໄດ້ຮັບການພັດທະນາຈົນເຖິງທ້າຍເດືອນມີນາ ປີ 2015. ຫົວຂໍ້ການຝຶກອົບຮົມຄູຝຶກ ຈະຖືກດຳເນີນໃນຊ່ວງໄຕມາດທີ່ສາມຂອງປີ 2015. ການຝຶກອົບຮົມຄູຝຶກຄັ້ງທີ່ສອງ ໄດ້ຄາດວ່າຈະດຳເນີນໃນຕອນທ້າຍປີ 2015.

ຄູຝຶກຂອງໂຄງການ ຫລັກສູດບຳລຸງການເງິນຈຸລະພາກ ແມ່ນຄູຝຶກ ທີ່ໄດ້ຮັບໃບຢັ້ງຢືນ ຈາກ ການຝຶກອົບຮົມຄູ ສຳເລັດແລ້ວ (ມີໃບປະກາດສະນິຍະບັດຮັບຮອງເປັນຄູຝຶກ), ແຕ່ຖ້າຫາກວ່າຍັງມີຄວາມຕ້ອງ, ແມ່ນສາມາດຈ້າງເອົາຄູຝຶກເພີ່ມເຕີມ ທີ່ເຮັດວຽກບໍ່ເຕັມເວລາ ຈາກຜູ້ສະໜອງການຝຶກອົບຮົມທີ່ມີໃນປະຈຸບັນ.

ໂດຍອີງໃສ່ການສອບເສັງພາກວິຊາຂຽນ ແລະ ປາກເປົ່າ, ຜູ້ເຂົ້າຮ່ວມທີ່ປະສົບຜົນສຳເລັດຫຼັກສູດການອອກໃບປະກາດສະນິຍະບັດ ຈະຖືກຮັບຮອງໂດຍຄະນະຜູ້ຊ່ຽວຊານ, ໂດຍສ່ວນໃຫຍ່ຈະປະກອບດ້ວຍ ຕົວແທນຈາກ MFA, ຜູ້ໃຫ້ທຶນທີ່ເຂົ້າຮ່ວມ, ທະນາຄານແຫ່ງ ສປປ ລາວ ແລະ ຜູ້ດຳເນີນການເງິນຈຸລະພາກອິດສະຫຼະ.

ວາລະສານ ສມກຈ

ສະບັບທີ 5 ເດືອນມັງກອນ ປີ 2015

## ການກວດສອບທາງດ້ານສັງຄົມ: ເຄື່ອງມືກວດສອບຜົນປະຕິບັດງານດ້ານສັງຄົມ

ການກວດສອບດ້ານສັງຄົມແມ່ນຫຍັງ?
ນີ້ເປັນເຄື່ອງມືໜຶ່ງທີ່ສາມາດນຳໃຊ້ເຂົ້າໃນການປະເມີນຜົນການປະຕິບັດງານດ້ານສັງຄົມ ຂອງສະຖາບັນການເງິນຈຸລະພາກ ເປັນເຄື່ອງມືຕົວຊີ້ວັດຜົນການປະຕິບັດງານດ້ານສັງຄົມ (*SPI*) ທີ່ຖືກພັດທະນາຂຶ້ນໂດຍ CERISE. ເຄື່ອງມືຕົວຊີ້ວັດຜົນການປະຕິບັດງານດ້ານສັງຄົມ (*SPI*) ໄດ້ປະເມີນຜົນການປະຕິບັດງານດ້ານສັງຄົມຂອງສະຖາບັນການເງິນຈຸລະພາກ ໂດຍປະເມີນຈາກເຈດຈຳນົງ ແລະ ການປະຕິບັດຂອງເຂົາເຈົ້າ. ໂດຍການວິເຄາະລະບົບພາຍໃນ ແລະ ຂະບວນການຈັດຕັ້ງ, ການກວດສອບທາງດ້ານສັງຄົມໄດ້ກວດສອບເບິ່ງວ່າ ສະຖາບັນ ໄດ້ມີວິທີການໃນການບັນລຸເປົ້າໝາຍດ້ານສັງຄົມຂອງຕົນແລ້ວບໍ່.

**ຜົນໄດ້ຮັບທັງ 4 ດ້ານ (ຂອບເຂດ)**
ປີ 2012 ສະມາຄົມການເງິນຈຸລະພາກ (MFA) ໄດ້ຮ່ວມມືກັບສູນກາງການເງິນຈຸລະພາກ (MFC), ເພື່ອດຳເນີນສອງໂຄງການການທົດລອງ ກ່ຽວກັບການກວດສອບທາງດ້ານສັງຄົມ ກັບສອງສະຖາບັນການເງິນຈຸລະພາກຫຼັກຂອງລາວ ໂດຍການນຳໃຊ້ເຄື່ອງມື ຕົວຊີ້ວັດຜົນການປະຕິບັດງານດ້ານສັງຄົມ (SPI tool). ຜົນຂອງການກວດສອບ ໄດ້ຖືກນຳສະເໜີໃນຮູບແບບຂອງແຜນວາດ (graphs), ເຊິ່ງສາມາດເບິ່ງເຫັນດັ່ງຂ້າງລຸ່ມນີ້:




**ເປັນຫຍັງການກວດສອບທາງດ້ານສັງຄົມຈຶ່ງມີຜົນປະໂຫຍດຕໍ່ບັນດາສະຖາບັນການເງິນຈຸລະພາກ**
ການກວດສອບທາງດ້ານສັງຄົມໄດ້ມີຈຸດປະສົງຫຼັກເພື່ອປັບປຸງການຄຸ້ມຄອງການປະຕິບັດງານທາງດ້ານສັງຄົມ ຂອງສະຖາບັນການເງິນຈຸລະພາກ. ນີ້ບໍ່ພຽງແຕ່ຈະເປັນຜົນປະໂຫຍດຕໍ່ລູກຄ້າແຕ່ຍັງເປັນຜົນໂຫຍດໃຫ້ກັບ ສກຈ ອີກດ້ວຍ:

- ✓ ຊ່ວຍປ້ອງກັນບັນຫາ (ຕົວຢ່າງ ລູກຄ້າຕິດໜີ້ຫຼາຍເກີນໄປ);
- ✓ ດີຕໍ່ສຳລັບສະຖານະທາງດ້ານການເງິນຂອງສະຖາບັນການເງິນຈຸລະພາກ (ຄຸນນະພາບລວມຍອດເງິນກູ້ສູງ, ຄ່າໃຊ້ຈ່າຍຕ່ຳ);
- ✓ ການລາຍງານກ່ຽວກັບການປະຕິບັດງານທາງດ້ານສັງຄົມມັກຈະເປັນເງື່ອນໄຂສຳລັບການເຂົ້າເຖິງ ການສະໜອງທຶນຈາກພາຍນອກ (ເຊັ່ນຈາກນັກລົງທຶນທາງດ້ານສັງຄົມ).

**ເຄື່ອງມືຕົວຊີ້ວັດຜົນການປະຕິບັດງານດ້ານສັງຄົມຈະເບິ່ງຢູ່ໃນ 4 ຂອບເຂດທີ່ແຕກຕ່າງກັນ**
ໂດຍຮູບປະທຳແລ້ວ, ການວິເຄາະການກວດສອບທາງດ້ານສັງຄົມທັງສີ່ (4) ມີດັ່ງນີ້:

- *ກຳໜົດກຸ່ມເປົ້າໝາຍ ແລະ ການເຂົ້າເຖິງຜູ້ທຸກຍາກ:* ວ່າສະຖາບັນການເງິນຈຸລະພາກໄດ້ມີ ຍຸດທະສາດສຳລັບການກຳນົດກຸ່ມເປົ້າຫມາຍ ແລະ ເຂົ້າເຖິງຜູ້ທຸກຍາກ / ຖືກຍົກເວັ້ນ ແລະ ດຳເນີນໄປໄດ້ ຫຼື ບໍ່?
- *ຜະລິດຕະພັນ ແລະ ການບໍລິການ:* ພວກເຂົາເຈົ້າສາມາດປັບຕົວເຂົ້າກັບຄວາມຕ້ອງການຂອງປະຊາຊົນຜູ້ທຸກຍາກ ແລະ ມີຄຸນນະພາບດີ ຫຼື ບໍ່?
- *ຜົນປະໂຫຍດໃຫ້ກັບລູກຄ້າ:* ລູກຄ້າໄດ້ເກັບກ່ຽວຜົນປະໂຫຍດທາງດ້ານເສດຖະກິດ ແລະ ສັງຄົມ ຫຼື ບໍ່ ແລະ ພວກເຂົາເຈົ້າສາມາດມີສ່ວນຮ່ວມໃນການຕັດສິນໃຈຂອງສະຖາບັນ MFI ຫຼື ບໍ່?
- *ຄວາມຮັບຜິດຊອບທາງສັງຄົມ:* ສກຈ ມີຄວາມຮັບຜິດຊອບທາງດ້ານສັງຄົມ ທີ່ມີຕໍ່ພະນັກງານ, ລູກຄ້າ, ຊຸມຊົນສ່ວນໃຫຍ່?

ເພື່ອປະເມີນຂອບເຂດຜົນໄດ້ຮັບເຫຼົ່ານີ້ (ໃນແຕ່ລະດ້ານ), ການກວດສອບທາງດ້ານສັງຄົມ ໄດ້ວິເຄາະພະລະກິດຂອງສະຖາບັນການເງິນຈຸລະພາກ, ຍຸດທະສາດ ແລະ ການຄຸ້ມຄອງບໍລິຫານ, ການຕັດສິນໃຈ ແລະ ການສື່ສານ, ການກຳນົດລູກຄ້າເປົ້າໝາຍ ແລະ ການເຂົ້າເຖິງ (outreach) ລວມໄປເຖິງ ຜະລິດຕະພັນ ແລະ ການບໍລິການຂອງເຂົາເຈົ້າ.

ເຄື່ອງມືຕົ້ນຕໍໃຊ້ໃນການປະຕິບັດການກວດສອບທາງດ້ານສັງຄົມເປັນແບບສອບຖາມທີ່ສົມບູນແບບ. ເຄື່ອງມື ເພື່ອປະເມີນຜົນການປະຕິບັດງານດ້ານສັງຄົມ (CERISE-SPI) ຫາໄດ້ເຜີຍແຜ່ອອກມາເມື່ອບໍ່ດົນມານີ້, ແບບສອບຖາມແບບປະສົມປະສານ (SPI 4.1.). ໃນ **SPI** 4.1. ປະກອບມີມາດຕະຖານການຢັ້ງຢືນການປົກປ້ອງລູກຄ້າຂອງ Smart Campaign. ແບບສອບຖາມໃຫມ່ນີ້ໄດ້ຖືກແປເປັນພາສາລາວ ແລະ ຈະໄດ້ຖືກນຳໃຊ້ເຂົ້າໃນການກວດສອບທາງດ້ານສັງຄົມໃນຕໍ່ໜ້າທີ່ຈະມາເຖິງນີ້.

**ວິທີການເຮັດວຽກການກວດສອບທາງດ້ານສັງຄົມເຮັດແບບໃດ?**
ໃນປີ 2012, ໄດ້ມີການດຳເນີນການກວດສອບທາງດ້ານສັງຄົມສອງຄັ້ງ ສະມາຄົມ/ສູນການເງິນຈຸລະພາກ (MFA / MFC) ໄດ້ນຳໃຊ້ວິທີການອັນດຽວກັນກັບການປະເມີນຕົນເອງ. the method of *Accompanied Self-Assessment*. ວິທີການດັ່ງກ່າວນີ້, "ຜູ້ກວດສອບ" ພາຍນອກ ຕອບຄຳຖາມທີ່ໄດ້ຍົກຂຶ້ນ ສະຖາບັນ (MFI) ໄດ້ຕື່ມ ແບບສອບຖາມ.
**ການກວດສອບທາງດ້ານສັງຄົມປົກກະຕິແລ້ວຈະຖືກປະຕິບັດຕາມ 4 ຂັ້ນຕອນດັ່ງນີ້:**

1) ***ການກະກຽມ:*** ແຈ້ງໃຫ້ສະຖາບັນ (**MFI**) ກ່ຽວກັບການການກວດສອບ, ການເກັບກຳຂໍ້ມູນຜົນການປະຕິບັດງານດ້ານການເງິນ ແລະ ສັງຄົມ;
2) ***ການຈັດຕັ້ງປະຕິບັດ***: ການລົງຢ້ຽມຢາມສະຖາບັນໂດຍກົງ / ຫຼື ການສຳພາດທາງໄກ, ການຕື່ມແບບສອບຖາມກ່ຽວກັບການຈັດການຄຸ້ມຄອງສະຖາບັນ, ການກວດສອບຂໍ້ມູນ, ການທົບທວນຄືນຂໍ້ມູນທີ່ຄົ້ນພົບເບື້ອງຕົ້ນທີ່ອາດເປັນໄປໄດ້;
3) ***ການລາຍງານ:*** ສຳເລັດແບບສອບຖາມກ່ຽວກັບຕົວຊີ້ວັດຜົນການປະຕິບັດງານທາງດ້ານສັງຄົມ (**SPI**), ການຮ່າງບົດລາຍງານສະຫຼຸບສັງລວມກ່ຽວກັບຜົນໄດ້ຮັບຂອງ SPI ລວມທັງການວິເຄາະແບບເປັນກຸ່ມ, ການລາຍງານຕໍ່ CE-RISE;
4) **ການໃຫ້ຄຳເຫັນຕໍ່ຄູ່ຮ່ວມງານຂອງບັນດາສະຖາບັນ (MFIs) ແລະ ການນຳໃຊ້ຂໍ້ມູນ:** ການສົ່ງບົດລາຍງານ / ສະຫຼຸບສັງລວມໃຫ້ MFI, ການຍົກຫົວຄຳຄິດເຫັນມາປຶກສາຫາລືກັບ MFI.

## ຂ່າວສານຈາກສະມາຊິກຂອງພວກເຮົາ

**ສກຈບ ຊ່ວຍກັນພັດທະນາ ແຂວງ ຫົວພັນ ໄດ້ຮັບການສ້າງຕັ້ງ ຖາວອນ**

ສກຈບ ຊ່ວຍກັນພັດທະນາ ທີ່ຂຶ້ນກັບສະຫະພັນແມ່ຍິງແຂວງ ໄດ້ຮັບການສ້າງຕັ້ງຊົ່ວຄາວຂຶ້ນໃນວັນທີ 1 ມິຖຸນາ 2009. ຫຼັງຈາກທີ່ສະຖາບັນໄດ້ຖອກທຶນຄົບໃນ ເດືອນກັນຍາ ປີ 2014, ສາມເດືອນ ຕໍ່ມາກໍ່ໄດ້ຮັບໃບອະນຸຍາດຖາວອນ. ມາເຖິງວັນທີ 13 ຕຸລາ 2014 ສະຖາບັນກໍ່ໄດ້ຈັດພິທີມອບໃບອະນຸຍາດດຳເນີນທຸລະກິດຂຶ້ນ, ຢູ່ທີ່ຫ້ອງຫໍວັດທະນາທຳແຂວງ ໂດຍໃຫ້ກຽດເປັນປະທານຂອງທ່ານ ສາຍສະໝອນ ກົບເກສອນ ຮອງຫົວໜ້າທະນາຄານແຫ່ງ ສປປ ລາວ ພາກເໜືອແຂວງຫຼວງພະບາງ ແລະ ທ່ານ ນາງ ລ້ອງຄຳ ພອນມີໄຊ ປະທານສະຫະພັນແມ່ຍິງແຂວງ, ປະທານສະພາບໍລິຫານ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຊ່ວຍກັນພັດທະນາ.



ພິທີມອບ ຮັບໃບສ້າງຕັ້ງ ຖາວອນ ສກຈບ ຊ່ວຍກັນພັດທະນາ

ສກຈບ ຊ່ວຍກັນພັດທະນາ ມີທຶນໃນເບື້ອງຕົ້ນ ປະມານ 42 ລ້ານ ກີບ (ປະມານ 5,000 ໂດລາສະຫະລັດ), ມາຮອດທ້າຍປີ 2014 ມີທຶນທັງໝົດ ຫຼາຍກວ່າ 900 ລ້ານ ກີບ (113,000 ໂດລາສະຫະລັດ), ປ່ອຍກູ້ໃຫ້ລູກຄ້າຈຳນວນ 622 ລ້ານ ກີບ, ວົງເງິນປ່ອຍກູ້ລະຫວ່າງ 500,000 – 10,000,000 ກີບ ໃນດອກເບ້ຍ 4% ຕໍ່ເດືອນ (ແບບຫຼຸດລົງ) ແລະ ກຳນົດເວລາ 1 ປີ.

**ກອງທຶນສະຫະກອນຈຳກັດ ສະແດງຄວາມພູມໃຈທີ່ໄດ້ຮັບລາງວັນທີ 2 ປະຈຳປີ 2014 ຈາກ ສມກຈ**

ກອງທຶນສະຫະກອນຈຳກັດ ໄດ້ຮັບລາງວັນທີ 2 ຈາກການຈັດອັນດັບ ຂອງ ສມກຈ ໂດຍມີເງື່ອນໄຂໃນການໃຫ້ຄະແນນ 12 ມາດຖານ. ຊຶ່ງລາງວັນທີ່ໄດ້ ກໍ່ແມ່ນ ໄດ້ທຶນການຝຶກອົບຮົມ ພາຍໃນ ຫຼື ຕ່າງປະເທດ 1 ທຶນ ແລະ ທັດສະນະສຶກສາ ພາຍໃນ ຫຼື ຕ່າງປະເທດ 1 ທຶນ. ຊຶ່ງລາງວັນທີ່ໄດ້ ແມ່ນ ທາງສະຖາບັນເຮົາ ຈະໄດ້ເຂົ້າຮ່ວມຝຶກອົບຮົມຫົວຂໍ້ "Community Based Microfinance for Financial Inclusion" ທີ່ AIT, ກຸງເທບ ປະເທດໄທ. "ຂ້າພະເຈົ້າ ກໍ່ຮູ້ສຶກພາກພູມໃຈຫຼາຍ ທີ່ ສະຖາບັນຂອງ ຂ້າພະເຈົ້າ ສາມາດຕິດ 1 ໃນ 3 ທີ່ ເປັນສະມາຊິກທີ່ມີຄວາມຫ້າວຫັນ ໃນການປະກອບສ່ວນເຂົ້າໃນກິດຈະກຳຂອງ ສະມາຄົມ ເຊັ່ນ ການເຂົ້າຮ່ວມກອງປະຊຸມ, ການສົ່ງບົດລາຍງານ ແລະ ອື່ນໆ. ແລະ ກໍ່ຫວັງວ່າ ໃນປີ 2015 ນີ້ ຈະມີຫຼາຍໆສະຖາບັນ ຈະປະກອບສ່ວນ ກັບ ສມກຈ ແລະ ຈະສາມາດຖືກຄັດເລືອກໃຫ້ເປັນແບບຢ່າງທີ່ດີໄດ້ເຊັ່ນດຽວກັນ" ກ່າວໂດຍ ທ່ານ ເພັດດາລາ ມະນີວົງ, ອຳນວຍການສະຫະກອນ.

**2 ສະຖາບັນ ສະມາຊິກ ສມກຈ ທາງພາກເໜືອ ເອົາໃຈໃສ່ປະກອບສ່ວນ ໃນກິດຈະກຳຕ່າງໆ ທາງດ້ານສັງຄົມ**

ໃນປີ 2014 ທີ່ຜ່ານມາ, ສກຈຣ ຈຳປາລາວ ໄດ້ປະກອບສ່ວນທາງດ້ານສັງຄົມຫຼາຍກິດຈະກຳ ເຊັ່ນ: ອຸປະ ຖຳ ເຮືອຊ່ວງ 2 ຄັ້ງ, ປະກອບສ່ວນສະໜັບສະໜູນ ອຸປະກອນການ ສຶກສາ ໃນ 4 ໂຮງຮຽນ ເຂດຊົນນະບົດ ໃນແຂວງຫລວງພະບາງ, ສະໜັບສະໜູນ ງານປະເພນີ ໃນ 6 ໝູ່ບ້ານ, ຄືນກຳໄລ ເປັນລາງວັນໃຫ້ລູກຄ້າທີ່ດີເດັ່ນ ແລະ ແຈກລາງວັນ ໃຫ້ລູກຄ້າຫ້າວຫັນ ລວມມູນຄ່າທັງໝົດ 72 ລ້ານ ກີບ.



ພະນັກງານ ສກຈຣ ຈຳປາລາວ ເຂົ້າຮ່ວມງານຍ່າງ ເພື່ອສະເຫຼີມສະຫຼອງການຕ້ານວັນໃຊ້ແຮງງານຕໍ່ກັບຜູ້ຍິງ ແລະ ເດັກນ້ອຍ

ພ້ອມນີ້ ສກຈບ ພັດທະນາອຸດົມໄຊ ໄດ້ຈັບລາງວັນຄືນກຳໄລໃຫ້ລູກຄ້າໃນແຕ່ລະບ້ານເປົ້າໝາຍ ເພື່ອຄືນກຳໄລໃຫ້ແກ່ລູກຄ້າ ໃນບ້ານ ທີ່ສະຖາບັນ ໃຫ້ບໍລິຫານ.




ສກຈບ ພັດທະນາອຸດົມໄຊອຸປະຖຳງານຕ່າງໆ ທາງດ້ານສັງຄົມທີ່ແຂວງອຸດົມໄຊ ລວມມູນຄ່າ 60 ລ້ານ ກີບ.

## ຂ່າວຈາກສະມາຄົມການເງິນຈຸລະພາກ

**ການພັດທະນາແຜນຍຸດທະສາດ ປີ 2015 – 2017**

ອີງໃສ່ຜົນໄດ້ຮັບຂອງກອງປະຊຸມສະມາຊິກສະພາບໍລິຫານຂອງ ສະມາຄົມການເງິນຈຸລະພາກ ກ່ຽວກັບການປຶກສາຫາລືການວາງແຜນ ເຊິ່ງໄດ້ຈັດຂຶ້ນໃນວັນທີ 27 ເດືອນ ມິຖຸນາ 2014, ທີມງານບໍລິຫານສະມາຄົມການເງິນຈຸລະພາກ ໄດ້ສ້າງແຜນຍຸດທະສາດ ປີ 2015 – 2017 ຂອງ ສມກຈ ຂຶ້ນ. ເຊິ່ງແຜນຍຸດທະສາດດັ່ງກ່າວໄດ້ກວມເອົາວິໄສທັດ, ພາລະກິດ ແລະ ຈຸດສຸມຍຸດທະສາດຂອງສະມາຄົມ (MFA) ພ້ອມທັງຜົນໄດ້ຮັບທີ່ເປັນຮູບປະທໍາ, ທີ່ສະມາຄົມຄາດວ່າຈະບັນລຸຜົນໄດ້ຈົນເຖິງປີ 2017. ໃນເດືອນທັນວາ, ແຜນຍຸດທະສາດສະບັບປັບປຸງຫຼ້າສຸດໄດ້ຖືກສົ່ງໃຫ້ບັນດາສະມາຊິກ ແລະ ຜູ້ໃຫ້ທຶນສໍາລັບຂໍ້ຄໍາຄິດເຫັນ ແລະ ແຜນຍຸດທະສາດດັ່ງກ່າວໄດ້ຮັບການອະນຸມັດໂດຍຄະນະບໍລິຫານງານ ແລະ ສະມາຊິກ ທ້າຍເດືອນທັນວາ ປີ 2014.

**ການຝຶກອົບຮົມກ່ຽວກັບວຽກງານເອກະສານ, ການບັນຊີຂອງສະຖາບັນ, ພາວະຜູ້ນໍາ, ການບໍລິຫານຈັດການຫ້ອງການ, ການກວດສອບ & ການຄວບຄຸມພາຍໃນອົງກອນ**

ໃນໄລຍະ 6 ເດືອນຜ່ານມາ, ສມກຈ ໄດ້ເລັ່ງໃສ່ຂັ້ນຕອນ ຂອງກິດຈະກໍາການຝຶກອົບຮົມທີ່ໄດ້ສະຫນອງໃຫ້ກັບສະມາຊິກ. ບໍ່ຫນ້ອຍກ່ວາ 8 ຫລັກສູດການຝຶກອົບຮົມ ແລະ ກອງປະຊຸມດ້ານວິຊາທີ່ແຕກຕ່າງກັນເຊັ່ນ: ການບັນຊີ, ການຄວບຄຸມ ແລະ ການກວດສອບພາຍໃນອົງກອນ, ການບໍລິຫານຈັດການຫ້ອງການ, ການມີພາວະຄວາມເປັນຜູ້ນໍາ ແລະອື່ນໆ, ເຊິ່ງກິດຈະກໍາດັ່ງກ່າວໄດ້ຖືກດໍາເນີນມາ ຕັ້ງແຕ່ເດືອນກໍລະກົດຂອງປີນີ້. ໂດຍທັງຫມົດ, ແມ່ນມີພະນັກງານຂອງສະມາຊິກປະມານ 153 ທ່ານ ລວມມີຜູ້ຈັດການ ແລະ ສະມາຊິກສະພາບໍລິຫານ, ທີ່ມາຈາກທົ່ວ 35 ສະຖາບັນການເງິນຈຸລະພາກ (ສກຈ) ທີ່ເປັນສະມາຊິກຂອງສະມາຄົມເຂົ້າຮ່ວມການຝຶກອົບຮົມດັ່ງກ່າວ. ການຝຶກອົບຮົມສ່ວນໃຫຍ່ຈະແມ່ນສະຖາບັນການຝຶກອົບຮົມຂອງລາວ ເປັນຜູ້ສະໜອງການຝຶກອົບຮົມ, ແຕ່ໃນຂະນະດຽວນັ້ນສ່ວນຫນຶ່ງຂອງກອງປະຊຸມປຶກສາຫາລືກໍ່ໄດ້ຮັບການຈັດຝຶກໂດຍຜູ້ສະໜອງການບໍລິການຝຶກອົບຮົມຂອງປະເທດກໍາປູເຈຍ.

**ການເຂົ້າຮ່ວມກອງປະຊຸມພົບປະແລກປ່ຽນກ່ຽວກັບການເງິນຈຸລະພາກເອເຊຍ 2014 ທີ່ຊ່ຽງໄຮ້ (Shanghai), ປະເທດຈີນ**

ປີ 2014 ປະທານ ສມກຈ, ທ່ານ ນ ວັນສີ ຈິນດາວົງ ແລະ ຜູ້ອໍານວຍການ ສມກຈ, ທ່ານ ນ ປະມວນ ເພັດທານີ ໄດ້ເຂົ້າຮ່ວມກອງປະຊຸມພົບປະແລກປ່ຽນ ກ່ຽວກັບການເງິນຈຸລະພາກເອເຊຍ ທີ່ໄດ້ຈັດຂຶ້ນໃນວັນທີ 4 ຫາ ວັນທີ 8 ເດືອນສິງຫາ ທີ່ຊ່ຽງໄຮ່ (Shanghai), ປະເທດຈີນ. ບັນດາທ່ານ ຜູ້ຕາງຫນ້າຂອງທະນາຄານແຫ່ງ ສ.ປ.ປ.ລາວ (ທຫລ) ສອງທ່ານ ກໍ່ໄດ້ເຂົ້າຮ່ວມ. ໃນສອງທ່ານນັ້ນໄດ້ມີ ທ່ານ ດຣ.ອາຄົມ ປຣະເສີດ, ຫົວໜ້າ ກົມຄຸ້ມຄອງສະຖາບັນການເງິນ (FISD). ກິດຈະກໍາດັ່ງກ່າວໄດ້ຈັດຂຶ້ນໂດຍ ການທະນາຄານເພື່ອເຄືອຂ່າຍຄົນທຸກຍາກ (BWTP) ແລະ ມູນນິທິເພື່ອການຮ່ວມມືພັດທະນາ (FDC) ແລະ ເປັນເຈົ້າພາບໂດຍສະມາຄົມການເງິນຈຸລະພາກຂອງປະເທດຈີນ (CAM).

**ກອງປະຊຸມສະມາຊິກ ຄັ້ງທີ່ 2 ປີ 2014 ໂດຍເນັ້ນໃສ່ ຫ້ອງການຂໍ້ມູນຂ່າວສານດ້ານສິນເຊື່ອ (Credit Information Bureau (CIB)**

ກອງປະຊຸມວິຊາການສະມາຊິກຄັ້ງທີສອງຂອງສະມາຄົມ (ສມກຈ) ໄດ້ຈັດຂຶ້ນໃນວັນທີ **2** ຕຸລາ **2014.** ໃນທີ່ກອງປະຊຸມນີ້, ຜູ້ຕາງຫນ້າຂອງກົມຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີ (**IT**) ຂອງທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ແຈ້ງໃຫ້ຊາບກ່ຽວກັບຄວາມເປັນໄປໄດ້ສໍາລັບບັນດາສະຖາບັນການເງິນຈຸລະພາກ (ສກຈ) ທີ່ຈະເຂົ້າເປັນສະມາຊິກຂອງ ຫ້ອງການຂໍ້ມູນຂ່າວສານດ້ານສິນເຊື່ອ (**CIB**). ໂດຍອີງຕາມທະນາຄານແຫ່ງ ສ.ປ.ປ.ລາວ (ທຫລ), ສະຖາບັນທັງຫມົດທີ່ໄດ້ລົງທະບຽນກັບທະນາຄານມີສິດໄດ້ເຂົ້າເປັນສະມາຊິກ. ລະບຽບການຂອງຫ້ອງການຂໍ້ມູນຂ່າວສານດ້ານສິນເຊື່ອ (CIB) ທີ່ມີຢູ່ຈະໄດ້ຮັບການແກ້ໄຂເພີ່ມເຕີມເພື່ອທີ່ຈະຮອງຮັບບັນດາສະຖາບັນການເງິນຈຸລະພາກ. ຄະນະກໍາມະການຮັບຜິດຊອບສະມາຊິກສະຖາບັນໄດ້ຖືກແຕ່ງຕັ້ງ, ຂັ້ນຕອນ ແລະ ລະບົບການທົດລອງສໍາລັບສະຖາບັນການເງິນຈຸລະພາກແມ່ນຢູ່ພາຍໃຕ້ການກະກຽມ. ເມື່ອໃດກໍ່ຕາມສະຖາບັນການເງິນຈຸລະພາກໄດ້ເປັນສະມາຊິກແລ້ວ ຈະສາມາດເຂົ້າຄົ້ນຫາຂໍ້ມູນຂ່າວສານດ້ານສິນເຊື່ອໂດຍກົງໃນລະບົບຕໍ່ການຊໍາລະສະສາງ ຫຼື ຈ່າຍເງິນຄ່າທໍານຽມ.

**ສະມາຄົມການເງິນຈຸລະພາກ ຮັບພະນັກງານໃໝ່ 2 ທ່ານ**

ເດືອນກໍລະກົດ 2014, ພະນັກງານໃໝ່ 2 ທ່ານ ໄດ້ເຂົ້າຮ່ວມເປັນພະນັກງານ ຂອງທີມງານບໍລິຫານ ຄື: ນ ໄພວັນ ສະເຫຼີມສຸກ ໄດ້ເຮັດວຽກໃຫ້ສະມາຄົມໃນຮູບແບບສັນຍາເປັນທີ່ປຶກສາ ຕັ້ງແຕ່ເດືອນກໍລະກົດເປັນຕົ້ນມາ ໃນຕໍາແໜ່ງພະນັກງານໂຄງການ, ເຊິ່ງຮັບຜິດຊອບວຽກງານການບໍລິຫານຈັດການຄວາມຮູ້. ຕໍ່ມາ ໃນຕົ້ນເດືອນຕຸລາ, ໄດ້ຮັບ ນາງ ຊາວະນາ ໂພທິລາດ, ຕໍາແໜ່ງພະນັກງານໂຄງການ ຮັບຜິດຊອບການຝຶກອົບຮົມ ຫຼື ການສ້າງຄວາມອາດສາມາດ. ພວກເຮົາຫວັງວ່າພະນັກງານໃໝ່ທັງສອງທ່ານ ຈະໄດ້ຮັບການຕ້ອນຮັບໂດຍຄວາມອົບອຸ່ນ.

**26 ສະມາຊິກ ໄດ້ຮັບຮອງເອົາຫຼັກປະພຶດປະຕິບັດ**

ຫຼັກປະພຶດປະຕິບັດສໍາລັບສະມາຊິກຂອງ ສມກຈ, ຊຶ່ງໄດ້ຖືກອະນຸມັດໂດຍສະພາບໍລິຫານ ໃນເດືອນ ມິນາ 2014, ມີ 26 ສະມາຊິກ ໄດ້ຮັບຮອງເອົາຢ່າງເປັນທາງການ. ໃນຈໍານວນ **26** ສະມາຊິກທີ່ໄດ້ຮັບຮອງເອົານັ້ນ, 20 ສະມາຊິກທີ່ເປັນສະມາຊິກເກົ່າ ແລະ ອີກ 6 ສະມາຊິກ ທີ່ເຂົ້າເປັນສະມາຊິກໃໝ່. ຫຼັກປະພຶດປະຕິບັດນີ້ໄດ້ກວມເອົາ ຫຼັກການ ແລະ ມາດຕະຖານກ່ຽວກັບການປົກປ້ອງລູກຄ້າໂດຍພື້ນຖານ, ແລະ ຍັງລວມໄປເຖິງຫຼັກການພື້ນຖານຈໍານວນຫນຶ່ງ ທີ່ກ່ຽວຂອງກັບຄວາມສໍາພັນຕໍ່ພະນັກງານ, ສມກຈ ແລະ ພາກສ່ວນທີ່ກ່ຽວຂອງອື່ນໆ.

**ການກວດສອບດ້ານສັງຄົມໄດ້ຖືກດໍາເນີນ 2 ຄັ້ງ ໃນເດືອນທັນວາ**

ໃນຊ່ວງເຄິ່ງທີ່ສອງ (ຫຼັງ) ຂອງເດືອນທັນວາ, ສມກຈ ໄດ້ດໍາເນີນການກວດສອບທາງດ້ານສັງຄົມ ເພີ່ມເຕີມອີກ 2 ເທື່ອທີ່ນໍາໃຊ້ເຄື່ອງມືຕົວຊີ້ວັດຜົນການປະຕິບັດງານດ້ານສັງຄົມ (**CERISE-SPI**) ກັບສອງສະຖາບັນທີ່ສໍາຄັນຂອງລາວ ຄື: ສະຖາບັນການເງິນຈຸລະພາກໄຊນິຍົມ ຢູ່ແຂວງອຸດົມໄຊ ແລະ ສະຖາບັນການເງິນຈຸລະພາກນິວຕັນ ຢູ່ນະຄອນຫຼວງວຽງຈັນ (ກະລຸນາເບິ່ງໜ້າທີ່ 3). ການກວດສອບສອງຄັ້ງດັ່ງກ່າວ ແມ່ນໄດ້ຖືກດໍາເນີນໂດຍຊ່ຽວຊານ ຟີລິບປິນໂນ (Philippino) ແລະ ພະນັກງານສະມາຊິກສອງທ່ານ.

# ວາລະສານ ສມກຈ

ສະບັບທີ 5 ເດືອນມັງກອນ ປີ 2015

ບັນດາເວບໄຊການເງິນຈຸລະພາກທີ່ເປັນປະໂຫຍດ:

Banking With The Poor Network (BWTP):

[www.bwtp.org](www.bwtp.org)

- Social Performance Task Force (SPTF):

  [www.sptf.info](www.sptf.info)

- Consultative Group to Assist the Poor (CGAP):

  [www.cgap.org](www.cgap.org)

- Microfinance Information Exchange (MIX):

  [www.mixmarket.org](www.mixmarket.org)

- Microfinance Gateway:

  [www.microfinancegateway.org](www.microfinancegateway.org)

- SEEP Network:

  [www.seepnetwork.org](www.seepnetwork.org)

- World Bank Data - Global Findex:

  [http://datatopics.worldbank.org/financialincl](http://datatopics.worldbank.org/financialincl)



*ສະໜັບສະໜູນໂດຍ: ADA*

*ບັນດາສະມາຊິກ: 59*

*ຈັດພິມໂດຍ:*

**ສະມາຄົມການເງິນຈຸລະພາກ**

ໜ່ວຍ 13, ບ້ານສີເມືອງ, ເມືອງສີສັດຕະນາກ

ຕູ້ ປ.ນ 4030 ນະຄອນຫຼວງວຽງຈັນ, ສ.ປ.ປ.ລາວ

Email: mfa@laomfa.org

Web: [www.laomfa.org](www.laomfa.org)

Tel: +856 21 226018/+856 30 948 1265

Fax: +856 21 226019